ASTRA

# Press-Release



ກໍລະກົດ 2022

# ກອງປະຊຸມຜູ້ບໍລິຫານໂຄງການ ASTRA

## ໂຄງການເສີມສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ ແລະ ການນໍາພາໃນດ້ານການເງິນຂອງພາກການສຶກສາຊັ້ນສູງ ໃນອາຊີ

### ວັນທີ 21 - 22 ກໍລະກົດ ປີ 2022, ນະຄອນຫຼວງວຽງຈັນ, ປະເທດລາວ

ໂຄງການ ASTRA (Advancing Strategic Management, Leadership and Fundraising in Higher Education in Asia) ເປັນໂຄງການໄລຍະເວລາ 3 ປີ (ເດືອນ ມັງກອນ 21 - ມັງກອນ 24) ໂດຍໄດ້ຮັບທຶນຈາກໂຄງການ Erasmus+ ພາຍໃຕ້ການເສີມສ້າງສັກກະຍະພາບໃນການດໍາເນີນການຂອງພາກສ່ວນການສຶກສາຊັ້ນສູງ ຊຶ່ງມີຈຸດປະສົງຕົ້ນຕໍເພື່ອການສະໜັບສະໜູນການດໍາເນີນງານຂອງພາກສ່ວນການສຶກສາຊັ້ນສູງໃນປະເທດລາວ ແລະ ປະເທດໄທ ໂດຍການເພີ່ມຂີດຄວາມສາມາດໃນການເຂົ້າເຖິງຊັບພະຍາກອນດ້ານການເງິນດ້ວຍການນໍາໃຊ້ປະໂຫຍດຈາກໂຄງການທີ່ສະໜັບສະໜູນການຄົ້ນຄວ້າ ແລະ ພັດທະນາດ້ານເທັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ ແລະ ວິທະຍາສາດສັງຄົມ.

ພາຍຫຼັງການຄົ້ນຄວ້າ ແລະ ເຮັດວຽກນໍາຄູ່ຮ່ວມພັນທະມິດ, ເຫັນໄດ້ວ່າບັນດາຄູ່ຮ່ວມພັນທະມິດຈະໄດ້ພົບປະໂອ້ລົມກັນໂດຍກົງ ແລະ ປຶກສາຫາລືກ່ຽວກັບຄວາມຄືບໜ້າ, ສິ່ງທ້າທາຍ ແລະ ວາລະຕໍ່ໄປຂອງໂຄງການ. ກອງປະຊຸມຄຸ້ມຄອງໂຄງການຈະຈັດຂຶ້ນໂດຍມີການເຂົ້າຮ່ວມຂອງທຸກພາກສ່ວນທີ່ມະຫາວິທະຍາໄລແຫ່ງຊາດ, ນະຄອນຫຼວງວຽງຈັນ, ໃນວັນທີ 21 ຫາ 22 ກໍລະກົດ 2022.

ໃນການປະຊຸມຄັ້ງນີ້ ມະຫາວິທະຍາໄລທີ່ເຂົ້າຮ່ວມໂຄງການຈະມີໂອກາດໄດ້ປຶກສາຫາລືກ່ຽວກັບວຽກງານທັງໝົດທີ່ໄດ້ເຮັດມາຈົນຮອດປັດຈຸບັນ ເພື່ອຮ່ວມກັນກໍານົດພາບລວມຂອງວຽກງານທັງໝົດພາຍໃຕ້ໂຄງການນີ້ ເຊັ່ນ: ຂັ້ນຕອນໃນການອອກແບບ ແລະ ການສ້າງຂີດຄວາມສາມາດ, ການເຝິກອົບຮົມ, ການຄຸ້ມຄອງ ແລະ ການດໍາເນີນການທົດລອງໂຄງການ (Hubs) ທັງໃນປະເທດລາວ ແລະ ໄທ. ໃນລະຫວ່າງການປະຊຸມດັ່ງກ່າວ ບັນດາມະຫາວິທະຍາໄລທີ່ຮ່ວມໂຄງການຈະດໍາເນີນການໃນການປະສານງານສ່ວນທີ່ຍັງເຫຼືອທັງໝົດ ຕະຫຼອດເຖິງ ການທົບທວນຄືນບັນດາກິດຈະກໍາທີ່ເກີດຂຶ້ນ ແລະ ວາງແຜນຂັ້ນຕອນຕໍ່ໄປຂອງໂຄງການ.

ພວກເຮົາຫວັງວ່າຈະໄດ້ພົບກັບທຸກທ່ານໃນວັນທີ 21 ແລະ 22 ກໍລະກົດ 2022 ນີ້!

ຫາກຕ້ອງການຂໍ້ມູນເພີ່ມເຕີມ ສາມາດເຂົ້າໄປເບິ່ງໄດ້ທີ່ ***ASTRA WEBSITE***, ***FACEBOOK PAGE*** ແລະ ***TWITTER ACCOUNT***




This project has been funded with support from the European Commission. The European Commission's support for the production of this document does not constitute an endorsement of the contents, which reflect the views only of the authors, and the Commission cannot be held responsible for any use which may be made of the information contained therein. Agreement number: 618963-EPP-I-2020-1-LA-EPPKA2-CBHE-JP



info@symplexis.eu
www.symplexis.eu


symplexis